ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ປປທ

ລົງວັນທີ 7 ຕຸລາ 2009.

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ

---

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 56/ຄປຈ, ລົງວັນທີ 01 ກັນຍາ 2009.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :

## ພາກທີ I

## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ.

ລັດຖະບັນຍັດສະບັບນີ້ ກຳນົດຫຼັກການ ແລະລະບຽບການກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ເພື່ອໃຫ້ການຄຸ້ມຄອງ ແລະ ການນຳໃຊ້ສົນທິສັນຍາສາກົນ ຖືກຕ້ອງຕາມຈຸດປະສົງ ແລະ ເປັນເອກະພາບກັນໃນທົ່ວປະເທດ, ແນໃສ່ປະຕິບັດນະໂຍບາຍສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ຮັບປະກັນການປະຕິບັດພັນທະ, ສິດ ແລະ ຜົນປະໂຫຍດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເສີມຂະຫຍາຍບົດບາດຂອງລັດ ໃນການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ຢ່າງມີປະສິດທິຜົນ.

ມາດຕາ 2. ການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ

ການສ້າງສົນທິສັນຍາສາກົນ ແມ່ນການດຳເນີນວຽກງານກະກຽມ ແລະ ຮັບຮອງເອົາເອກະສານດ້ານກົດໝາຍໃດໜຶ່ງທີ່ກຳນົດສິດ ແລະ ຂໍ້ຜູກພັນລະຫວ່າງລັດດ້ວຍກັນ ຫຼື ລະຫວ່າງລັດກັບອົງການຈັດຕັ້ງສາກົນ ຫຼື ພາກພື້ນ ຫຼື ນິຕິບຸກຄົນອື່ນຕາມກົດໝາຍສາກົນ ເພື່ອຄຸ້ມຄອງການພົວພັນ ແລະ ຮ່ວມມືຊຶ່ງກັນ ແລະ ກັນ ໂດຍເລີ່ມຈາກການເຈລະຈາຈົນເຖິງເວລາທີ່ເອກະສານໄດ້ຮັບການລົງນາມ.

ການເຂົ້າຮ່ວມເປັນພາຄີ ແມ່ນການສະແດງຄວາມສະໝັກໃຈຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານທີ່ຈະຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາສາກົນພະຫຸພາຄີ ໃນກໍລະນີທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ໄດ້ລົງນາມໃນສົນທິສັນຍາສາກົນດັ່ງກ່າວ.

ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ແມ່ນການນຳເອົາສົນທິສັນຍາສາກົນມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ປາກົດຜົນເປັນຈິງ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດຂອງຊາດ ລວມທັງການວາງ, ປັບປຸງນະໂຍບາຍຂອງລັດ, ການສ້າງ ແລະ ການປັບປຸງກົດໝາຍພາຍໃນ ໃຫ້ສອດຄ່ອງກັບສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນລັດຖະບັນຍັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ສົນທິສັນຍາສາກົນ ໝາຍເຖິງຂໍ້ຕົກລົງລະຫວ່າງປະເທດທີ່ສ້າງຂຶ້ນຢ່າງເປັນລາຍລັກອັກສອນລະຫວ່າງລັດກັບລັດ ຫຼື ລະຫວ່າງລັດກັບອົງການຈັດຕັ້ງສາກົນ ຫຼື ພາກພື້ນ ຫຼື ນິຕິບຸກຄົນອື່ນຕາມກົດໝາຍສາກົນ ຊຶ່ງສາມາດສ້າງຂຶ້ນເປັນສະບັບດຽວ ຫຼື ຫຼາຍສະບັບຕິດແນບເຂົ້າກັນ ແລະຈະເອີ້ນຊື່ແນວໃດກໍໄດ້ ເຊັ່ນ: ສົນທິສັນຍາ, ສັນຍາ, ຂໍ້ຕົກລົງ, ອານຸສັນຍາ, ບົດບັນ ທຶກຄວາມເຂົ້າໃຈ, ຈົດໝາຍແລກປ່ຽນ ຫຼື ເອກະສານທີ່ມີຊື່ອື່ນ.

ສົນທິສັນຍາທີ່ຖືກສ້າງຂຶ້ນລະຫວ່າງສອງລັດ ຫຼື ສອງຝ່າຍ ເອີ້ນວ່າ ສົນທິສັນຍາທະວິພາຄີ ແລະ ສົນທິສັນຍາທີ່ຖືກສ້າງຂຶ້ນລະຫວ່າງຫຼາຍລັດ ຫຼື ຫຼາຍຝ່າຍ ເອີ້ນວ່າ ສົນທິສັນຍາ ພະຫຸພາຄີ;

2. ພາຄີ ໝາຍເຖິງ ລັດ, ອົງການຈັດຕັ້ງສາກົນ ຫຼື ພາກພື້ນ, ນິຕິບຸກຄົນອື່ນຕາມກົດໝາຍສາກົນ ທີ່ໄດ້ສະໝັກໃຈຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ດັ່ງກ່າວໄດ້ມີຜົນສັກສິດນຳໃຊ້ຕໍ່ລັດ, ອົງການຈັດຕັ້ງ ແລະ ນິຕິບຸກຄົນເຫຼົ່ານັ້ນແລ້ວ;

3. ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ໝາຍເຖິງບັນດາກະຊວງ ແລະ ອົງການຊຶ່ງໄດ້ຮັບການມອບໝາຍຈາກລັດຖະບານ;

4. ໃບມອບສິດ ໝາຍເຖິງເອກະສານມອບອຳນາດ ຈາກອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດອຳນາດຂອງລັດ ກ່ຽວກັບການແຕ່ງຕັ້ງບຸກຄົນໜຶ່ງ ຫຼື ຫຼາຍຄົນເປັນຜູ້ຕາງໜ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອເຈລະຈາ, ຮັບຮອງເອົາ ຫຼື ຮັບຮູ້ຂໍ້ຄວາມຖືກຕ້ອງຂອງສົນທິສັນຍາ, ເພື່ອສະແດງຄວາມສະໝັກໃຈຂອງລັດ ທີ່ຈະຮັບປະຕິບັດຂໍ້ຜູກພັນຕາມ ສົນທິສັນຍາ ຫຼື ເພື່ອປະຕິບັດບົດບັນຍັດທີ່ກ່ຽວຂ້ອງຂອງສົນທິສັນຍາສາກົນນັ້ນ;

5. ການໃຫ້ສັດຕະຍາບັນ ໝາຍເຖິງ ການກະທຳ ທີ່ ສະພາແຫ່ງຊາດຕົກລົງ ແລະ ປະທານປະເທດ ປະກາດກ່ຽວກັບການສະແດງຄວາມສະໝັກໃຈຂອງລັດ ທີ່ຈະຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາສາກົນທີ່ໄດ້ຮັບການລົງນາມ ໂດຍຜູ້ຕາງໜ້າຂອງລັດຖະບານ ຫຼື ສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າຮ່ວມເປັນພາຄີ;

6. ການຮັບຮອງ ໝາຍເຖິງການກະທຳທີ່ລັດຖະບານ ສະແດງຄວາມສະໝັກໃຈຂອງຕົນທີ່ຈະຮັບປະຕິບັດຂໍ້ຜູກພັນຕາມສົນທິສັນຍາສາກົນນັ້ນ;

7. ຂໍ້ສະຫງວນ ໝາຍເຖິງ ຖະແຫຼງການຝ່າຍດຽວ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສ້າງຂຶ້ນໃນເວລາ ລົງນາມ, ຮັບຮອງ, ເຂົ້າຮ່ວມເປັນພາຄີ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາພະຫຸພາຄີ ຊຶ່ງໃນນັ້ນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະແດງຈຸດປະສົງ ເພື່ອຂໍຍົກເວັ້ນ ຫຼື ປ່ຽນແປງຜົນສັກສິດທາງດ້ານກົດໝາຍຂອງບາງເນື້ອໃນບົດບັນຍັດຂອງສົນທິສັນຍາສາກົນ ສຳລັບປະເທດຂອງຕົນ;

8. ການຍົກເລີກສົນທິສັນຍາສາກົນ ໝາຍເຖິງຖະແຫຼງການຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງສະແດງຈຸດປະສົງເພື່ອຂໍລົບລ້າງ, ຢຸດເຊົາ ແລະ ຖອນຕົວອອກຈາກຂໍ້ຜູກພັນຕາມສົນທິສັນຍາສາກົນທີ່ຕົນເປັນພາຄີ;

9. ການໂຈະການນຳໃຊ້ສົນທິສັນຍາສາກົນ ໝາຍເຖິງ ຖະແຫຼງການຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຊຶ່ງປະກາດຢຸດເຊົາຊົ່ວຄາວ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນທີ່ຕົນເປັນພາຄີ ບາງສ່ວນ ຫຼື ທັງໝົດ;

10. ລັດທີ່ຮັບ ຫຼື ປະເທດທີ່ຮັບ ໝາຍເຖິງ ລັດ ຫຼື ປະເທດ ທີ່ຮັບເອົາສຳນັກງານຜູ້ຕາງໜ້າທາງການທູດ ຫຼື ຜູ້ຕາງໜ້າຖາວອນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳປະເທດນັ້ນ.

### ມາດຕາ 4. ນະໂຍບາຍ ກ່ຽວກັບ ສົນທິສັນຍາສາກົນ

ລັດສົ່ງເສີມການເປັນພາຄີຂອງສົນທິສັນຍາສາກົນທີ່ເຫັນວ່າມີຄວາມສຳຄັນ ແລະ ເປັນຜົນປະໂຫຍດໃຫ້ແກ່ປະເທດຊາດ, ພາກພື້ນ ແລະ ສາກົນ ບົນພື້ນຖານການເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ເພື່ອສ້າງເງື່ອນໄຂ ແລະ ສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາ ແລະ ການພັດທະນາປະເທດຊາດ.

### ມາດຕາ 5. ຫລັກການພື້ນຖານ ກ່ຽວກັບ ສົນທິສັນຍາສາກົນ

ການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນດຳເນີນບົນຫລັກການພື້ນຖານດັ່ງນີ້ :

1. ຮັບປະກັນຄວາມສອດຄ່ອງກັບລັດຖະທຳມະນູນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຫຼັກການພື້ນຖານຂອງກົດໝາຍສາກົນ;

2. ເຄົາລົບ ແລະ ປະຕິບັດຕາມນະໂຍບາຍການຕ່າງປະເທດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

3. ລັດຖະບານ ຕ້ອງສົ່ງສົນທິສັນຍາໃນລະດັບລັດ ແລະ ສົນທິສັນຍາທີ່ຮຽກຮ້ອງການໃຫ້ສັດຕະຍາບັນໄປຍັງຄະນະປະຈຳສະພາແຫ່ງຊາດ ຢ່າງຊ້າສິບຫ້າວັນລັດຖະການ ກ່ອນການເຈລະຈາ, ລົງນາມ ຫຼື ເຂົ້າຮ່ວມເປັນພາຄີ ເພື່ອພິຈາລະນາໃຫ້ຄວາມເຫັນດີໃນດ້ານຫຼັກການ. ສ່ວນສົນທິສັນຍາອື່ນ ແມ່ນສາມາດສົ່ງໄປຍັງສະພາແຫ່ງຊາດ ເພື່ອໃຊ້ຕາງລາຍງານກ່ຽວກັບການດຳເນີນບາດກ້າວຂອງການສ້າງ ແລະ ເຂົ້າຮ່ວມເປັນພາຄີສົນທິສັນຍາ.

4. ສົນທິສັນຍາສາກົນໃນລະດັບຕ່ຳ ຕ້ອງບໍ່ຂັດກັບສົນທິສັນຍາສາກົນໃນລະດັບສູງກວ່າ;

5. ຕ້ອງມີແຜນການ, ດຳເນີນຕາມຂັ້ນຕອນ ແລະ ມີການປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ.

ມາດຕາ 6. ຂອບເຂດການນຳໃຊ້ລັດຖະບັນຍັດ

ລັດຖະບັນຍັດສະບັບນີ້ ນຳໃຊ້ສຳລັບວຽກງານການຄຸ້ມຄອງ ການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ.

ສ່ວນວຽກງານການສ້າງ ແລະ ການຈັດຕັ້ງປະຕິບັດສັນຍາກັບຕ່າງປະເທດ ໃນລະດັບສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງ ແລະ ອົງການຂອງລັດຖະບານ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການປົກຄອງທ້ອງຖິ່ນ ມີລະບຽບການສະເພາະ.

## ພາກທີ II
## ສົນທິສັນຍາສາກົນ

ມາດຕາ 7. ປະເພດ ສົນທິສັນຍາສາກົນ

ປະເພດສົນທິສັນຍາສາກົນ ໄດ້ຮັບການຈັດລຽງ ດັ່ງນີ້:

1. ປະເພດສົນທິສັນຍາສາກົນໃນລະດັບລັດ ມີຄື:
   1) ສົນທິສັນຍາສາກົນ ກ່ຽວກັບການເສີມຂະຫຍາຍມິດຕະພາບ ແລະ ການຮ່ວມມື,ສັນຕິພາບ, ຄວາມໝັ້ນຄົງ, ຊາຍແດນ, ດິນແດນ ແລະ ອະທິປະໄຕຂອງຊາດ;
   2) ສົນທິສັນຍາສາກົນກ່ຽວກັບສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ແລະ ການຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານກົດໝາຍໃນບັນຫາອາຍາ ແລະ ແພ່ງ;
   3) ສົນທິສັນຍາສາກົນກ່ຽວກັບອົງການຈັດຕັ້ງສາກົນທີ່ມີລັກສະນະທົ່ວໄປ ແລະ ອົງການຈັດຕັ້ງພາກພື້ນທີ່ສຳຄັນ;
   4) ສົນທິສັນຍາສາກົນອື່ນທີ່ສຳຄັນ ຊຶ່ງຖືກສ້າງຂຶ້ນດ້ວຍຄວາມເຫັນດີນຳກັນຂອງພາຄີທີ່ກ່ຽວຂ້ອງ.
2. ປະເພດສົນທິສັນຍາສາກົນໃນລະດັບລັດຖະບານ ມີຄື:
   1) ສົນທິສັນຍາສາກົນ ສຳລັບການຈັດຕັ້ງປະຕິບັດສົນທິສັນຍາ ຊຶ່ງລັດໄດ້ສ້າງຂຶ້ນ ຫຼື ເຂົ້າຮ່ວມເປັນພາຄີ;
   2) ສົນທິສັນຍາສາກົນ ກ່ຽວກັບ ຂົງເຂດວຽກງານ ຊຶ່ງບໍ່ໄດ້ກຳນົດໄວ້ໃນຂໍ້ 1) ແລະ 2) ໃນຂໍ້ 1 ຂອງມາດຕານີ້;
   3) ສົນທິສັນຍາສາກົນ ກ່ຽວກັບການຮ່ວມມືພາຍໃນຂອບເຂດຂອງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງພາກພື້ນ ຊຶ່ງບໍ່ໄດ້ກຳນົດໄວ້ໃນຂໍ້ 3) ໃນຂໍ້ 1 ຂອງມາດຕານີ້;
   4) ສົນທິສັນຍາສາກົນທີ່ຖືກສ້າງຂຶ້ນດ້ວຍຄວາມເຫັນດີນຳກັນຂອງພາຄີທີ່ກ່ຽວຂ້ອງ ຊຶ່ງບໍ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

ສຳລັບຊື່ຂອງສົນທິສັນຍາສາກົນ ແລະ ລະດັບຂອງອົງການທີ່ສ້າງສົນທິສັນຍາສາກົນແມ່ນຖືກກຳນົດດ້ວຍການຕົກລົງເຫັນດີນຳກັນຂອງພາຄີທີ່ກ່ຽວຂ້ອງ ໂດຍຄຳນຶງເຖິງເນື້ອໃນຂອງສົນທິສັນຍາສາກົນນັ້ນ.

ມາດຕາ 8. ລະດັບສົນທິສັນຍາສາກົນ

ສົນທິສັນຍາສາກົນ ຖືກສ້າງຂຶ້ນໃນລະດັບຕ່າງໆ ດັ່ງນີ້ :

1. ລັດ;

2. ລັດຖະບານ.

ມາດຕາ 9. ໂຄງປະກອບຂອງສົນທິສັນຍາສາກົນ

ສົນທິສັນຍາສາກົນທະວິພາຄີ ມີໂຄງປະກອບທີ່ສຳຄັນ ຄື : ພາກອາລຳພະບົດ, ຈຸດປະສົງ, ເນື້ອໃນ, ບົດບັນຍັດສຸດທ້າຍ, ລາຍເຊັນ, ຊື່ ແລະ ນາມສະກຸນ ພ້ອມດ້ວຍຕຳແໜ່ງຂອງຜູ້ລົງນາມ ແລະ ຕາປະທັບແຫ່ງຂອງກະຊວງການຕ່າງປະເທດ ຫຼື ຕາປະທັບແຫ່ງຂອງສຳນັກງານຜູ້ຕາງໜ້າທາງການທູດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສ່ວນສົນທິສັນຍາສາກົນພະຫຸພາຄີ ມີໂຄງປະກອບທີ່ສຳຄັນເຊັ່ນດຽວກັນກັບສົນທິສັນຍາສາກົນທະວິພາຄີ ແຕ່ບໍ່ມີຕາປະທັບ.

ມາດຕາ 10. ການສ້າງຂໍ້ສະຫງວນ

ໃນກໍລະນີທີ່ຕ້ອງການສ້າງຂໍ້ສະຫງວນໃນເວລາລົງນາມ, ຮັບຮອງ, ເຂົ້າຮ່ວມເປັນພາຄີ, ໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນພະຫຸພາຄີ ຊຶ່ງມີບົດບັນຍັດທີ່ອະນຸຍາດໃຫ້ສ້າງຂໍ້ສະຫງວນໄດ້ນັ້ນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນໃນລະດັບລັດ ແລະ ລັດຖະບານຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອສະເໜີເນື້ອໃນ ແລະ ເຫດຜົນຂອງການສ້າງ ຂໍ້ສະຫງວນໄປຍັງອົງການທີ່ມີສິດອຳນາດຂອງລັດ.

ຂໍ້ສະຫງວນ ທີ່ໄດ້ຮັບການອະນຸມັດແລ້ວນັ້ນ ສາມາດກຳນົດໄວ້ໃນເອກະສານທີ່ກ່ຽວຂ້ອງ ເຊັ່ນ : ສານເຂົ້າຮ່ວມເປັນພາຄີ, ສານຮັບຮອງ, ສານສັດຕະຍາບັນ ຫຼື ສານສ້າງຂໍ້ສະຫງວນ.

ມາດຕາ 11. ການຖອນ ແລະ ການຄັດຄ້ານ ຂໍ້ສະຫງວນ

ໃນການສະເໜີຖອນ ຫຼື ຄັດຄ້ານຂໍ້ສະຫງວນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ພະຫຸພາຄີ ໃນລະດັບລັດ ແລະ ລັດຖະບານນັ້ນຕ້ອງສະເໜີໄປຍັງອົງການທີ່ມີສິດອຳນາດຂອງລັດ ເພື່ອພິຈາລະນາຕົກລົງກ່ຽວກັບການຖອນຂໍ້ສະຫງວນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ການຄັດຄ້ານຂໍ້ສະຫງວນຂອງພາຄີທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ຮັບຄຳເຫັນເປັນລາຍລັກອັກສອນຈາກກະຊວງການຕ່າງປະເທດ, ກະຊວງຍຸຕິທຳ, ກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງແລ້ວ.

ອົງການທີ່ມີສິດອຳນາດຂອງລັດ ຊຶ່ງໄດ້ອະນຸມັດການລົງນາມ, ການຮັບຮອງ, ການເຂົ້າຮ່ວມເປັນພາຄີ,ການໃຫ້ສັດຕະຍາບັນນັ້ນເປັນຜູ້ອອກແຈ້ງການກ່ຽວກັບການຕົກລົງຖອນຂໍ້ສະຫງວນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫຼື ຄັດຄ້ານຂໍ້ສະຫງວນຂອງພາຄີທີ່ກ່ຽວຂ້ອງ.

ມາດຕາ 12. ພາສາທີ່ໃຊ້ໃນສົນທິສັນຍາສາກົນ

ສົນທິສັນຍາສາກົນທະວິພາຄີ ຊຶ່ງໄດ້ຮັບການສ້າງຂຶ້ນລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບປະເທດໃດໜຶ່ງນັ້ນ ຕ້ອງເຮັດເປັນພາສາລາວໜຶ່ງສະບັບ ຍົກເວັ້ນກໍລະນີທີ່ມີການຕົກລົງກັນໄວ້ຢ່າງອື່ນ.

ອົງການທີ່ສະເໜີສ້າງສົນທິສັນຍາ ຕ້ອງປະສານສົມທົບກັບ ກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທຳ ເພື່ອສ້າງສົນທິສັນຍານັ້ນເປັນ ສະບັບພາສາລາວ. ຈາກນັ້ນ ກະຊວງການຕ່າງປະເທດ ຈຶ່ງຍື່ນຂໍ້ສະເໜີຂໍອະນຸມັດໄປຍັງລັດຖະບານ ເພື່ອພິຈາລະນາຕົກລົງ.

ໃນກໍລະນີທີ່ສົນທິສັນຍາສາກົນພະຫຸພາຄີ ຫາກບໍ່ມີສະບັບພາສາລາວນັ້ນ ກ່ອນການສະເໜີເຂົ້າຮ່ວມ ແລະ ການພິມເຜີຍແຜ່ສົນທິສັນຍາດັ່ງກ່າວ ອົງການທີ່ສະເໜີເຂົ້າຮ່ວມເປັນພາຄີຕ້ອງແປສົນທິສັນຍາສາກົນນັ້ນເປັນພາສາລາວ ແລະ ຈັດສົ່ງໄປຍັງກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທໍາ ເພື່ອກວດກາຄວາມສອດຄ່ອງກັບສະບັບພາສາຕ່າງປະເທດ. ຈາກນັ້ນ ກະຊວງການຕ່າງປະເທດ ຈຶ່ງຍື່ນຂໍ້ສະເໜີຂໍອະນຸມັດໄປຍັງລັດຖະບານ ເພື່ອພິຈາລະນາຕົກລົງ.

**ມາດຕາ 13. ຜົນສັກສິດຂອງສົນທິສັນຍາສາກົນ**

ເມື່ອໃດທີ່ບໍ່ມີການແຈ້ງ ກ່ຽວກັບ ການຢຸດເຊົາ, ການລົບລ້າງ, ການຖອນຕົວອອກຈາກສົນທິສັນຍາສາກົນ ຫຼື ການໂຈະການນໍາໃຊ້ສົນທິສັນຍາສາກົນ ຊຶ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຊັນ ແລະ ເປັນພາຄີນັ້ນ ສົນທິສັນຍາສາກົນ ແມ່ນມີຜົນສັກສິດນໍາໃຊ້ຕໍ່ໄປ.

## ພາກທີ III
## ການສ້າງ ແລະ ການເຂົ້າຮ່ວມເປັນພາຄີ ສົນທິສັນຍາສາກົນ
### ໝວດທີ 1
### ການສ້າງສົນທິສັນຍາສາກົນ

**ມາດຕາ 14. ຂັ້ນຕອນການສ້າງສົນທິສັນຍາສາກົນ**

ການສ້າງສົນທິສັນຍາສາກົນ ແມ່ນ ດໍາເນີນດ້ວຍການເຈລະຈາ ແລະ ການລົງນາມ.

**ມາດຕາ15. ການເຈລະຈາ ແລະ ການລົງນາມ**

ການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ຕ້ອງດໍາເນີນບົນພື້ນຖານສິດ ແລະ ໜ້າທີ່ ຊຶ່ງໄດ້ຮັບການມອບໝາຍໃນການຄຸ້ມຄອງລັດໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ ແລະ ຕາມຄວາມຮຽກຮ້ອງຕ້ອງການຂອງການຮ່ວມມືກັບຕ່າງປະເທດ ດັ່ງນີ້:

1. ບັນດາກະຊວງ ແລະ ອົງການຊຶ່ງໄດ້ຮັບການມອບໝາຍຈາກລັດຖະບານນັ້ນແລ້ວຕ້ອງເປັນເຈົ້າການໃນການຄົ້ນຄວ້າ, ສະເໜີຂໍອະນຸມັດຈາກລັດຖະບານ ໂດຍຜ່ານກະຊວງການຕ່າງປະເທດ ເພື່ອເຈລະຈາ ແລະ ລົງນາມສົນທິສັນຍາສາກົນໃນລະດັບລັດ ຫຼື ລັດຖະບານ ໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງ ແລະ ກະຊວງຍຸຕິທໍາ;

2. ການສະເໜີຂໍອະນຸມັດຈາກລັດຖະບານເພື່ອເຈລະຈາ ແລະ ລົງນາມສົນທິສັນຍາສາກົນກ່ຽວກັບການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມື, ສັນຕິພາບ, ຄວາມໝັ້ນຄົງ, ຊາຍແດນ, ດິນແດນ ແລະ ອະທິປະໄຕຂອງຊາດ ແລະ ສົນທິສັນຍາສາກົນອື່ນທີ່ສໍາຄັນ ແມ່ນຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ ຊຶ່ງຕ້ອງປະສານສົມທົບກັບກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງໂດຍກົງກັບເນື້ອໃນຂອງສົນທິສັນຍາ;

3. ໃນກໍລະນີທີ່ສົນທິສັນຍາສາກົນໃນລະດັບລັດຖະບານ ທີ່ຈະເຈລະຈາ ແລະ ລົງນາມນັ້ນມີບົດບັນຍັດທີ່ຂັດກັບນິຕິກໍາທີ່ໄດ້ປະກາດໃຊ້ແລ້ວ ຫຼື ທີ່ບໍ່ໄດ້ກໍານົດໄວ້ໃນນິຕິກໍາດັ່ງກ່າວອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງປຶກສາຫາລືກັບອົງການອື່ນທີ່ກ່ຽວຂ້ອງ ແລະ ຂໍຄໍາເຫັນຈາກ

ກະຊວງຍຸຕິທຳ. ຄຳເຫັນຂອງກະຊວງຍຸຕິທຳ ແລະ ອົງການທີ່ກ່ຽວຂ້ອງນັ້ນຕ້ອງເຮັດເປັນລາຍລັກອັກສອນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ. ໃນກໍລະນີທີ່ສົນທິສັນຍາສາກົນ ໃນລະດັບລັດ ຫຼື ສົນທິສັນຍາທີ່ຮຽກຮ້ອງການໃຫ້ສັດຕະຍາບັນ ຊຶ່ງຈະເຈລະຈາ ແລະ ລົງນາມ ນັ້ນຫາກມີບົດບັນຍັດ ຄືດັ່ງກ່າວ ລັດຖະບານຕ້ອງສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາໃຫ້ຄວາມເຫັນດີໃນດ້ານຫຼັກການເສຍກ່ອນ.

### ມາດຕາ 16. ສິດອຳນາດອະນຸມັດການເຈລະຈາ ແລະ ການລົງນາມ

ອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດອຳນາດອະນຸມັດການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ມີດັ່ງນີ້ :

1. ປະທານປະເທດ ມີສິດອຳນາດອະນຸມັດການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ໃນລະດັບລັດ;

2. ຄະນະປະຈຳສະພາແຫ່ງຊາດ ມີສິດອຳນາດ ຕົກລົງໃຫ້ຄວາມເຫັນດີໃນດ້ານຫຼັກການກ່ຽວກັບການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນໃນລະດັບລັດ, ສົນທິສັນຍາສາກົນ ທີ່ຮຽກຮ້ອງການໃຫ້ສັດຕະຍາບັນ;

3. ລັດຖະບານ ມີສິດອຳນາດອະນຸມັດການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ໃນລະດັບລັດຖະບານ;

4. ອົງການຈັດຕັ້ງທີ່ມີສິດອຳນາດຂອງລັດ ດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ຕ້ອງຕົກລົງກ່ຽວກັບການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ພາຍໃນກຳນົດສາມສິບວັນ ນັບແຕ່ວັນໄດ້ຮັບການສະເໜີຂໍອະນຸມັດການເຈລະຈາ ແລະ ການລົງນາມເປັນຕົ້ນໄປ.

### ມາດຕາ 17. ການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນຊຶ່ງບໍ່ຈຳເປັນຕ້ອງມີໃບມອບສິດ

ປະທານປະເທດ, ນາຍົກລັດຖະມົນຕີ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ບໍ່ຈຳເປັນຕ້ອງມີໃບມອບສິດ ເພື່ອເຈລະຈາ ແລະ ລົງນາມສົນທິສັນຍາສາກົນ ລວມທັງການເຂົ້າຮ່ວມກອງປະຊຸມສາກົນ ແລະ ພາກພື້ນທີ່ພົວພັນເຖິງການເຈລະຈາ, ການຮັບຮອງຂໍ້ຄວາມຖືກຕ້ອງຂອງສົນທິສັນຍາສາກົນ ຫຼື ການຈັດຕັ້ງປະຕິບັດສົນທິສັນຍາສາກົນ.

ຫົວໜ້າສຳນັກງານຜູ້ຕາງໜ້າທາງການທູດຢູ່ຕ່າງປະເທດ ຫຼື ສຳນັກງານຜູ້ຕາງໜ້າຖາວອນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳອົງການຈັດຕັ້ງສາກົນ ແລະ ພາກພື້ນບໍ່ຈຳເປັນຕ້ອງມີໃບມອບສິດ ເພື່ອເຈລະຈາ ແລະ ຮັບຮອງຂໍ້ຄວາມຖືກຕ້ອງຂອງສົນທິສັນຍາສາກົນກັບລັດທີ່ຮັບ ຫຼື ອົງການຈັດຕັ້ງສາກົນ ແລະ ພາກພື້ນ ທີ່ຕົນປະຈຳຢູ່ ລວມທັງການເຂົ້າຮ່ວມກອງປະຊຸມສາກົນຊຶ່ງຈັດຂຶ້ນຢູ່ໃນປະເທດທີ່ຮັບ ແລະ ພົວພັນເຖິງການເຈລະຈາ ແລະ ການຮັບຮອງຂໍ້ຄວາມຖືກຕ້ອງຂອງສົນທິສັນຍາສາກົນ.

ນອກຈາກບຸກຄົນທີ່ກ່າວມາຂ້າງເທິງນີ້ ຜູ້ຕາງໜ້າຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຳເປັນຕ້ອງມີໃບມອບສິດຈາກລັດຖະບານ ເພື່ອເຈລະຈາ ແລະ ລົງນາມ ສົນທິສັນຍາສາກົນ ໂດຍສອດຄ່ອງກັບ ມາດຕາ 19 ຂອງລັດຖະບັນຍັດສະບັບນີ້.

### ມາດຕາ 18. ການແຕ່ງຕັ້ງຜູ້ຕາງໜ້າ ແລະການມອບສິດເພື່ອເຂົ້າຮ່ວມເຈລະຈາ ແລະ ລົງນາມສົນທິສັນຍາສາກົນ

ການແຕ່ງຕັ້ງຜູ້ຕາງໜ້າ ແລະ ການມອບສິດ ເພື່ອເຂົ້າຮ່ວມເຈລະຈາ ແລະ ລົງນາມ ສົນທິສັນຍາສາກົນ ໃຫ້ປະຕິບັດ ດັ່ງນີ້ :

1. ຫົວໜ້າຄະນະຜູ້ແທນທີ່ເຂົ້າຮ່ວມເຈລະຈາ ແລະ ລົງນາມສົນທິສັນຍາສາກົນໃນລະດັບລັດ ຕ້ອງໄດ້ຮັບການແຕ່ງຕັ້ງ ແລະ ການມອບສິດຈາກປະທານປະເທດ ຫຼື ຈາກນາຍົກລັດຖະມົນຕີ ຖ້າຫາກແມ່ນສົນທິສັນຍາສາກົນໃນລະດັບລັດຖະບານ;

2. ຫົວໜ້າຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມສາກົນ ແລະ ພາກພື້ນ ຕ້ອງໄດ້ຮັບການແຕ່ງຕັ້ງ ແລະ ການມອບສິດ ຈາກລັດຖະບານຢ່າງເປັນລາຍລັກອັກສອນ;

3. ຜູ້ຕາງໜ້າລັດຖະບານທີ່ໄດ້ຮັບການແຕ່ງຕັ້ງ ແລະ ການມອບສິດ ເພື່ອເຈລະຈາ ແລະ ລົງນາມ ຫຼື ເຂົ້າຮ່ວມກອງປະຊຸມສາກົນ ແລະ ພາກພື້ນນັ້ນຕ້ອງແມ່ນລັດຖະມົນຕີ ຫຼື ຫົວໜ້າອົງການ.

ໃນກໍລະນີ ການສະເໜີແຕ່ງຕັ້ງຫາກບໍ່ແມ່ນລັດຖະມົນຕີ ຫຼື ຫົວໜ້າອົງການ ເປັນຜູ້ຕາງໜ້ານັ້ນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງປະສານສົມທົບກັບກະຊວງການ ຕ່າງປະເທດ ເພື່ອສະເໜີຂໍອະນຸມັດຈາກລັດຖະບານ;

4. ໃນກໍລະນີທີ່ບໍ່ມີຄວາມສາມາດສົ່ງຜູ້ຕາງໜ້າໄປລົງນາມສົນທິສັນຍາສາກົນ ຫຼື ເຂົ້າຮ່ວມກອງປະຊຸມສາກົນ ແລະ ພາກພື້ນ ທີ່ຕ່າງປະເທດນັ້ນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ ເພື່ອສະເໜີລັດຖະບານ ມອບສິດໃຫ້ຫົວໜ້າສໍານັກງານຜູ້ຕາງໜ້າທາງການທູດ ຫຼື ສໍານັກງານຜູ້ຕາງໜ້າຖາວອນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈໍາອົງການຈັດຕັ້ງສາກົນ ແລະ ພາກພື້ນ ເພື່ອລົງນາມ ຫຼື ເຂົ້າຮ່ວມກອງປະຊຸມ ນັ້ນ.

## ມາດຕາ 19. ການອອກໃບມອບສິດ ເພື່ອເຈລະຈາ, ລົງນາມ ແລະ ໃບແຕ່ງຕັ້ງເພື່ອເຂົ້າຮ່ວມກອງປະຊຸມສາກົນ ແລະ ພາກພື້ນ

ການອອກໃບມອບສິດຈາກລັດຖະບານເພື່ອເຈລະຈາ, ລົງນາມ ແລະ ໃບແຕ່ງຕັ້ງເພື່ອເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບສົນທິສັນຍາສາກົນ ໃຫ້ປະຕິບັດ ດັ່ງນີ້:

1. ເມື່ອໄດ້ຮັບການອະນຸມັດແລ້ວ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ໃນລະດັບລັດ ແລະ ລັດຖະບານນັ້ນ ຕ້ອງປະກອບເອກະສານສົ່ງໄປຍັງກະຊວງການຕ່າງປະເທດ ເພື່ອສະເໜີອອກໃບມອບສິດ ສໍາລັບການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ;

2. ບົນພື້ນຖານການຕົກລົງຂອງລັດຖະບານນັ້ນ ນາຍົກລັດຖະມົນຕີ ອອກໃບມອບສິດໃຫ້ແກ່ຫົວໜ້າຄະນະຜູ້ແທນທີ່ເປັນລັດຖະມົນຕີ ຫລື ຫົວໜ້າອົງການ ເພື່ອເຂົ້າຮ່ວມການເຈລະຈາ, ການລົງນາມ ຫຼື ອອກໃບແຕ່ງຕັ້ງ ເພື່ອເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບສົນທິສັນຍາສາ ກົນ;

3. ໂດຍປະຕິບັດຕາມການອະນຸມັດຂອງນາຍົກລັດຖະມົນຕີ ນັ້ນ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ອອກໃບມອບສິດ ໃຫ້ແກ່ຫົວໜ້າຄະນະຜູ້ແທນທີ່ເປັນລັດຖະມົນຕີຊ່ວຍວ່າການ, ຮອງຫົວໜ້າອົງການ ຫຼື ພະນັກງານຂັ້ນກົມ ເພື່ອເຂົ້າຮ່ວມການເຈລະຈາ, ການລົງນາມ ຫຼື ອອກໃບແຕ່ງຕັ້ງເພື່ອເຂົ້າຮ່ວມກອງປະຊຸມທີ່ກ່ຽວຂ້ອງກັບສົນທິສັນຍາສາກົນ.

ໃນກໍລະນີທີ່ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຕິດຂັດ ຫຼື ບໍ່ຢູ່ປະຈໍາການນັ້ນ ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ຊຶ່ງໄດ້ຮັບການມອບໝາຍສາມາດອອກໃບມອບ ສິດ ຫຼື ໃບແຕ່ງຕັ້ງ ແທນ;

4. ໃບມອບສິດ ສໍາລັບ ການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນ ຕ້ອງຖືກແລກປ່ຽນ ແລະ ມອບໃຫ້ພາຄີທີ່ກ່ຽວຂ້ອງ.

## ໝວດທີ 2
## ການເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນພະຫຸພາຄີ

**ມາດຕາ 20. ຂັ້ນຕອນການເຂົ້າຮ່ວມເປັນພາຄີ**

ການເຂົ້າຮ່ວມເປັນພາຄີ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້ :

- ການສະເໜີຂອງອົງການທີ່ກ່ຽວຂ້ອງ;
- ການປະສານສົມທົບກັບກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ;
- ການຂໍອະນຸມັດ ຈາກລັດຖະບານ ດ້ວຍຄວາມເຫັນດີຂອງກະຊວງການຕ່າງປະເທດ ຫຼື ຈາກສະພາແຫ່ງຊາດ ດ້ວຍຄວາມເຫັນດີຂອງລັດຖະບານ.

**ມາດຕາ 21. ການສະເໜີເຂົ້າຮ່ວມເປັນພາຄີ**

ກະຊວງ ແລະ ອົງການ ເປັນຜູ້ສະເໜີເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນ ທີ່ກ່ຽວຂ້ອງກັບຂະແໜງການຂອງຕົນ ຕາມພາລະບົດບາດ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຄວາມຈຳເປັນໃນການຮ່ວມມືກັບຕ່າງປະເທດ.

ກ່ອນສະເໜີຂໍອະນຸມັດຈາກລັດຖະບານ ກ່ຽວກັບການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນໃດໜຶ່ງ ນັ້ນ ອົງການທີ່ສະເໜີເຂົ້າຮ່ວມເປັນພາຄີ ຕ້ອງປະກອບເອກະສານສະເໜີຂໍອະນຸມັດ ດັ່ງນີ້ :

- ຂໍ້ສະເໜີຂໍອະນຸມັດ ທີ່ມີເນື້ອໃນໜັກແໜ້ນ ແລະ ຄວາມເຫັນ ກ່ຽວກັບ ຈຸດປະສົງ ແລະ ຄວາມຮຽກຮ້ອງຕ້ອງການໃນການເຂົ້າຮ່ວມເປັນພາຄີ, ບົດບັນຍັດທີ່ສຳຄັນຂອງສົນທິສັນຍາສາກົນ, ສິດ ແລະ ພັນທະຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພາຍໃຕ້ສົນທິສັນຍາສາກົນ, ການຕີລາຄາຜົນປະໂຫຍດ ແລະ ຜົນກະທົບຈາກການເຂົ້າຮ່ວມເປັນພາຄີ, ການສົມທຽບລະຫວ່າງບົດບັນຍັດຂອງສົນທິສັນຍາສາກົນ ແລະ ກົດໝາຍພາຍໃນ;
- ສຳເນົາ ສົນທິສັນຍາສາກົນ ແລະ ບົດແປເປັນພາສາລາວ;
- ຄວາມເຫັນຂອງກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະອົງການອື່ນທີ່ກ່ຽວຂ້ອງ;
- ແຜນງານສຳລັບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ແລະເອກະສານອື່ນທີ່ກ່ຽວຂ້ອງ.

ກະຊວງການຕ່າງປະເທດ ເປັນເຈົ້າການ ແລະ ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ ເພື່ອສະເໜີຂໍອະນຸມັດຈາກລັດຖະບານ ກ່ຽວກັບການເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນທີ່ພົວພັນ ເຖິງການເສີມຂະຫຍາຍມິດຕະພາບ ແລະ ການຮ່ວມມື, ສັນຕິພາບ, ຄວາມໝັ້ນຄົງ, ຊາຍແດນ, ດິນແດນ ແລະ ອະທິປະໄຕຂອງຊາດ.

ໃນກໍລະນີທີ່ກະຊວງການຕ່າງປະເທດ ສະເໜີຂໍອະນຸມັດຈາກລັດຖະບານກ່ຽວກັບ ການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນນັ້ນ ກະຊວງການຕ່າງປະເທດ ຕ້ອງໄດ້ຮັບຄຳເຫັນຢ່າງເປັນລາຍລັກອັກສອນຈາກກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 22. ການປະສານສົມທົບກັບກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ**

ໃນການສະເໜີຂໍອະນຸມັດເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນ ກະຊວງ ແລະ ອົງການ ທີ່ສະເໜີນັ້ນ ຕ້ອງໄດ້ຈັດຕັ້ງການປຶກສາຫາລື ແລະ ປະສານສົມທົບກັບກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອຄວາມເຫັນດີເຫັນພ້ອມນຳກັນ.

ມາດຕາ 23. ການຂໍອະນຸມັດຈາກລັດຖະບານ ດ້ວຍຄວາມເຫັນດີຂອງກະຊວງການຕ່າງປະເທດ ຫຼື ຈາກສະພາແຫ່ງຊາດ ດ້ວຍຄວາມເຫັນດີຂອງລັດຖະບານ

ກະຊວງ ແລະ ອົງການທີ່ສະເໜີເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນຕ້ອງສົ່ງຂໍ້ສະເໜີຂໍອະນຸມັດມາຍັງກະຊວງການຕ່າງປະເທດ ເພື່ອກວດກາຄວາມຖືກຕ້ອງສອດຄ່ອງກັບສົນທິສັນຍາສາກົນ ແລະ ໃຫ້ຄວາມເຫັນດີ ກ່ອນສະເໜີຂໍອະນຸມັດຈາກລັດຖະບານ ສໍາລັບການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນໃນລະດັບລັດຖະບານ.

ໃນກໍລະນີ ການສະເໜີເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສາກົນໃນລະດັບລັດ ແລະ ສົນທິສັນຍາສາກົນທີ່ຮຽກຮ້ອງການໃຫ້ສັດຕະຍາບັນນັ້ນ ຂໍ້ສະເໜີຂໍອະນຸມັດຕ້ອງນໍາສົ່ງມາຍັງ ກະຊວງການຕ່າງປະເທດ ເພື່ອໃຫ້ຄວາມເຫັນດີ ກ່ອນນໍາສະເໜີລັດຖະບານ ເພື່ອຂໍອະນຸມັດຈາກສະພາແຫ່ງຊາດ.

ມາດຕາ 24. ການຕົກລົງກ່ຽວກັບການເຂົ້າຮ່ວມເປັນພາຄີ

ສະພາແຫ່ງຊາດ ມີສິດອໍານາດຕົກລົງ ກ່ຽວກັບການເຂົ້າຮ່ວມເປັນພາຄີ ຕາມການສະເໜີຂອງລັດຖະບານ ດັ່ງນີ້ :

1. ສົນທິສັນຍາສາກົນ ຊຶ່ງຖືກສ້າງຂຶ້ນໃນລະດັບລັດ;
2. ສົນທິສັນຍາສາກົນ ຊຶ່ງມີເນື້ອໃນ ບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ຫຼື ບໍ່ໄດ້ກໍານົດໄວ້ໃນກົດໝາຍພາຍໃນ;
3. ສົນທິສັນຍາສາກົນ ຊຶ່ງມີເນື້ອໃນກໍານົດໃຫ້ມີການໃຫ້ສັດຕະຍາບັນ ໂດຍສະເພາະ.

ລັດຖະບານ ມີສິດອໍານາດຕົກລົງກ່ຽວກັບການເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນ ໃນລະດັບລັດຖະບານ ໂດຍແຈ້ງໃຫ້ສະພາແຫ່ງຊາດຊາບ.

ມາດຕາ 25. ການປະກາດການໃຫ້ສັດຕະຍາບັນສໍາລັບການເຂົ້າຮ່ວມເປັນພາຄີ

ຫຼັງຈາກສະພາແຫ່ງຊາດ ຕົກລົງໃຫ້ສັດຕະຍາບັນສົນທິສັນຍາພະຫຸພາຄີແລ້ວ ຕ້ອງສະເໜີໄປຍັງປະທານປະເທດ ເພື່ອປະກາດການໃຫ້ສັດຕະຍາບັນ ໂດຍສອດຄ່ອງກັບມາດຕາ 30 ຂອງລັດຖະທໍາມະນູນສະບັບນີ້.

ຫຼັງຈາກໄດ້ຮັບການຕົກລົງ ແລະ ການປະກາດການໃຫ້ສັດຕະຍາບັນແກ່ສົນທິສັນຍາພະຫຸພາຄີ ໂດຍສອດຄ່ອງກັບມາດຕາ 30 ນັ້ນແລ້ວ ລັດຖະມົນຕີວ່າການກະຊວງການຕ່າງປະເທດເປັນຜູ້ລົງນາມສານເຂົ້າຮ່ວມເປັນພາຄີ ພາຍໃນກໍານົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບການປະກາດການໃຫ້ສັດຕະຍາບັນເປັນຕົ້ນໄປ.

ພາຍໃນກໍານົດ ສາມສິບວັນ ຫຼັງຈາກໄດ້ຮັບແຈ້ງການກ່ຽວກັບການຕົກລົງອະນຸມັດໃຫ້ ເຂົ້າຮ່ວມເປັນພາຄີແລ້ວ ກະຊວງການຕ່າງປະເທດ ເປັນຜູ້ດໍາເນີນການຍື່ນສານເຂົ້າຮ່ວມເປັນພາຄີຕາມຂັ້ນຕອນ, ລາຍງານໄປຍັງອົງການທີ່ມີສິດອໍານາດຂອງລັດ ແລະ ແຈ້ງກ່ຽວກັບຜົນສັກສິດຂອງສົນທິສັນຍານັ້ນ ໃຫ້ອົງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ.

# ໝວດທີ 3
# ການຮັບຮອງ ແລະ ການໃຫ້ສັດຕະຍາບັນ

## ມາດຕາ 26. ການຮັບຮອງ

ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ໃນລະດັບລັດຖະບານນັ້ນຕ້ອງສະເໜີຂໍການຮັບຮອງຈາກລັດຖະບານ ໂດຍສອດຄ່ອງກັບກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບົດບັນຍັດຂອງສົນທິສັນຍາສາກົນທີ່ກ່ຽວຂ້ອງໂດຍຜ່ານ ແລະ ປະສານສົມທົບກັບກະຊວງການຕ່າງປະເທດ ພາຍໃນກຳນົດ ສາມສິບວັນ ຫຼັງຈາກການລົງນາມ ແລ້ວ.

ລັດຖະບານ ອອກແຈ້ງການ ກ່ຽວກັບ ຄຳຕົກລົງໃຫ້ການຮັບຮອງ ຢ່າງເປັນລາຍລັກອັກສອນ ພາຍໃນກຳນົດ ສາມສິບວັນ ຫຼັງຈາກໄດ້ຮັບການສະເໜີຂອງອົງການທີ່ສະເໜີສ້າງສົນທິສັນຍາສາກົນ ເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເປັນຜູ້ລົງນາມສານຮັບຮອງ ເພື່ອຍື່ນໄປ ຍັງພາຄີທີ່ກ່ຽວຂ້ອງ ຫຼື ຜູ້ເກັບຮັກສາສົນທິສັນຍາສາກົນນັ້ນ.

## ມາດຕາ 27. ປະເພດສົນທິສັນຍາສາກົນ ທີ່ຕ້ອງໄດ້ຮັບການຮັບຮອງ

ປະເພດສົນທິສັນຍາສາກົນ ໃນລະດັບລັດຖະບານທີ່ຕ້ອງໄດ້ຮັບການຮັບຮອງ ມີດັ່ງນີ້ :

1. ສົນທິສັນຍາສາກົນທີ່ມີບົດບັນຍັດ ກ່ຽວກັບ ການຮັບຮອງ;
2. ສົນທິສັນຍາສາກົນ ຊຶ່ງມີບົດບັນຍັດທີ່ຂັດກັບນິຕິກຳ ທີ່ກ່ຽວຂ້ອງຂອງລັດຖະບານ ຫຼື ທີ່ບໍ່ໄດ້ກຳນົດໄວ້ໃນນິຕິກຳດັ່ງກ່າວ.

## ມາດຕາ 28. ການສະເໜີຂໍສັດຕະຍາບັນ

ພາຍໃນກຳນົດ ສາມສິບວັນ ຫຼັງຈາກການລົງນາມແລ້ວ ອົງການທີ່ສະເໜີສ້າງສົນທິສັນຍາສາກົນໃນລະດັບລັດ ແລະ ລັດຖະບານນັ້ນ ຕ້ອງສະເໜີຂໍສັດຕະຍາບັນ ໂດຍສອດຄ່ອງກັບກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບົດບັນຍັດຂອງສົນທິສັນຍາທີ່ກ່ຽວຂ້ອງ ໂດຍຜ່ານ ແລະ ປະສານສົມທົບກັບກະຊວງການຕ່າງປະເທດ.

ໃນກໍລະນີທີ່ສົນທິສັນຍາສາກົນ ຫາກກ່ຽວຂ້ອງກັບການກູ້ຢືມເງິນຈາກຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ແລະ ພາກພື້ນນັ້ນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງສະເໜີຂໍຄຳເຫັນດ້ານກົດໝາຍຈາກກະຊວງຍຸຕິທຳ ກ່ອນການສະເໜີຂໍສັດຕະຍາບັນ.

## ມາດຕາ 29. ປະເພດສົນທິສັນຍາສາກົນທີ່ຕ້ອງໃຫ້ສັດຕະຍາບັນ

ສົນທິສັນຍາສາກົນທີ່ຕ້ອງໄດ້ຮັບການຕົກລົງໃຫ້ສັດຕະຍາບັນຈາກສະພາແຫ່ງຊາດ ແລະ ການປະກາດການໃຫ້ສັດຕະຍາບັນ ໂດຍປະທານປະເທດ ມີດັ່ງນີ້ :

1. ສົນທິສັນຍາສາກົນ ທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 7 ຂອງລັດຖະບັນຍັດສະບັບນີ້;
2. ສົນທິສັນຍາສາກົນ ຊຶ່ງມີເນື້ອໃນບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ ຫຼື ບໍ່ໄດ້ກຳນົດໄວ້ໃນກົດໝາຍພາຍໃນ;
3. ສົນທິສັນຍາສາກົນ ທີ່ກ່ຽວຂ້ອງກັບງົບປະມານແຫ່ງລັດ ຕາມການສະເໜີຂອງລັດຖະບານ ເພື່ອໃຫ້ສັດຕະຍາບັນ;
4. ສົນທິສັນຍາສາກົນ ຊຶ່ງມີບົດບັນຍັດທີ່ກຳນົດໃຫ້ມີການໃຫ້ສັດຕະຍາບັນ ໂດຍສະເພາະ.

ມາດຕາ 30. ການປະກາດການໃຫ້ສັດຕະຍາບັນ

ພາຍໃນກຳນົດ ສິບຫ້າວັນ ຫຼັງຈາກການຕົກລົງໃຫ້ສັດຕະຍາບັນແລ້ວ ສະພາແຫ່ງຊາດຕ້ອງສະເໜີໄປຍັງປະທານປະເທດ ເພື່ອປະກາດການໃຫ້ສັດຕະຍາບັນ.

ໂດຍປະສານສົມທົບກັບອົງການທີ່ສະເໜີສ້າງສົນທິສັນຍາສາກົນ ກະຊວງການຕ່າງປະເທດ ຕ້ອງແຈ້ງໃຫ້ພາຄີທີ່ກ່ຽວຂ້ອງຂອງສົນທິສັນຍາທະວິພາຄີຊາບ ຫຼື ແລກປ່ຽນສານປະກາດການໃຫ້ສັດຕະຍາບັນກັບພາຄີດັ່ງກ່າວ ພາຍໃນກຳນົດ ສິບຫ້າວັນ ຫຼັງຈາກການປະກາດການໃຫ້ສັດຕະຍາບັນ.

ໂດຍປະຕິບັດຕາມການປະກາດການໃຫ້ສັດຕະຍາບັນຂອງປະທານປະເທດ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເປັນຜູ້ລົງນາມສານສັດຕະຍາບັນ ສຳລັບສົນທິສັນຍາພະຫຸພາຄີ ຊຶ່ງກະຊວງການຕ່າງປະເທດ ຕ້ອງຍື່ນໄປຍັງ ພາຄີທີ່ກ່ຽວຂ້ອງ ຫຼື ຜູ້ເກັບຮັກສາສົນທິສັນຍາດັ່ງກ່າວ ພາຍໃນກຳນົດ ສິບຫ້າວັນ ຫຼັງຈາກການປະກາດການໃຫ້ສັດຕະຍາບັນ.

ໃນກໍລະນີທີ່ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຕິດຂັດ ຫຼື ບໍ່ຢູ່ປະຈຳການນັ້ນ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ທີ່ໄດ້ຮັບການມອບໝາຍ ເປັນຜູ້ລົງນາມສານສັດຕະຍາບັນແທນ.

## ພາກທີ IV
## ການຈັດຕັ້ງປະຕິບັດສົນທິສັນຍາສາກົນ
## ໝວດທີ 1
## ການປະຕິບັດສົນທິສັນຍາສາກົນ

**ມາດຕາ 31. ການຜັນຂະຫຍາຍສົນທິສັນຍາສາກົນ**

ສົນທິສັນຍາສາກົນທີ່ຕ້ອງຜັນຂະຫຍາຍ ແມ່ນສົນທິສັນຍາສາກົນທີ່ມີເນື້ອໃນບໍ່ສອດຄ່ອງ ຫຼື ບໍ່ໄດ້ກຳນົດໄວ້ໃນກົດໝາຍພາຍໃນ.

ໂດຍອີງຕາມເນື້ອໃນ ແລະ ລັກສະນະຂອງສົນທິສັນຍາສາກົນດັ່ງກ່າວ ໃນເວລາພິຈາລະນາຕົກລົງກ່ຽວກັບ ການລົງນາມ, ການຮັບຮອງ, ການເຂົ້າຮ່ວມເປັນພາຄີ ຫຼື ການໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນ ນັ້ນ ອົງການທີ່ມີສິດອຳນາດຕົກລົງ ຕ້ອງພິຈາລະນາກ່ຽວກັບຄວາມຮຽກຮ້ອງຕ້ອງການໃນການສະເໜີ ປັບປຸງ, ລົບລ້າງ ຫລື ປະກາດໃຊ້ນິຕິກຳພາຍໃນທີ່ເໝາະສົມສຳລັບການຈັດຕັ້ງປະຕິບັດສົນທິສັນຍາສາກົນທີ່ກ່ຽວຂ້ອງ.

ກົດໝາຍພາຍໃນປະເທດທີ່ຖືກປະກາດໃຊ້ນັ້ນ ຕ້ອງບໍ່ສົ່ງຜົນກະທົບໃຫ້ແກ່ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ.

ໃນກໍລະນີທີ່ບົດບັນຍັດໃດໜຶ່ງຂອງກົດໝາຍພາຍໃນ ຫາກແຕກຕ່າງ ຫຼື ຂັດກັບບົດບັນຍັດຂອງສົນທິສັນຍາສາກົນ ໃນເລື່ອງດຽວກັນຊຶ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີນັ້ນ ບົດບັນຍັດດັ່ງກ່າວຂອງສົນທິສັນຍາສາກົນແມ່ນໄດ້ຮັບການປະຕິບັດ.

ມາດຕາ 32. ການຈັດຕັ້ງປະຕິບັດສົນທິສັນຍາສາກົນໂດຍກົງ

ສົນທິສັນຍາສາກົນທີ່ຕ້ອງຈັດຕັ້ງປະຕິບັດໂດຍກົງ ແມ່ນສົນທິສັນຍາທີ່ມີເນື້ອໃນສອດຄ່ອງ ແລະ ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍພາຍໃນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບໍ່ຮຽກຮ້ອງໃຫ້ມີການປັບປຸງນິຕິກຳພາຍໃນທີ່ມີຢູ່ແລ້ວ ຫຼື ອອກນິຕິກຳໃໝ່ຕື່ມ.

ການຈັດຕັ້ງປະຕິບັດສົນທິສັນຍາສາກົນໂດຍກົງ ແມ່ນດຳເນີນໄດ້ໃນທັນໃດ ພາຍຫຼັງທີ່ສົນທິສັນຍາສາກົນມີຜົນສັກສິດ.

## ມາດຕາ 33. ການພິມເຜີຍແຜ່.

ສົນທິສັນຍາສາກົນທີ່ມີຜົນສັກສິດສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງໄດ້ຮັບການພິມເຜີຍແຜ່ ໂດຍອົງການທີ່ສະເໜີສ້າງສົນທິສັນຍາສາກົນ ທີ່ໄດ້ຮັບການມອບໝາຍ.

ກະຊວງການຕ່າງປະເທດ ປະສານສົມທົບກັບກະຊວງຍຸຕິທຳ, ກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ ເພື່ອຈັດພິມສົນທິສັນຍາສາກົນລົງໃນຈົດໝາຍເຫດທາງລັດຖະການ.

ກະຊວງການຕ່າງປະເທດ ຮັບຜິດຊອບການພິມເຜີຍແຜ່ ບັນຊີ ແລະ ສາລະບານສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ໃນແຕ່ລະໄລຍະ.

## ມາດຕາ 34. ການຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາສາກົນ

ການຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາສາກົນ ມີດັ່ງນີ້ :

1. ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ແມ່ນໄດ້ຮັບການມອບໝາຍ ແລະ ແຕ່ງຕັ້ງເປັນອົງການໃຈກາງຂັ້ນສູນກາງ ເພື່ອຈັດຕັ້ງປະຕິບັດສົນທິສັນຍາສາກົນ ຢ່າງມີປະສິດທິຜົນ ແລະ ອົງການອື່ນທີ່ກ່ຽວຂ້ອງແມ່ນໄດ້ຮັບການມອບໝາຍ ແລະແຕ່ງຕັ້ງເປັນອົງການປະສານສົມທົບ ແລະ ຮ່ວມມື. ການມອບໝາຍ ແລະ ການແຕ່ງຕັ້ງດັ່ງກ່າວຕ້ອງໄດ້ກຳນົດໄວ້ໃນເອກະສານແຈ້ງການຕົກລົງກ່ຽວກັບການລົງນາມ ແລະ ການເຂົ້າຮ່ວມເປັນພາຄີ;

2. ອົງການທີ່ສະເໜີສ້າງສົນທິສັນຍາສາກົນນັ້ນ ມີໜ້າທີ່ສະເໜີແຜນການຈັດຕັ້ງປະຕິບັດໄປຍັງລັດຖະບານ ຊຶ່ງໃນແຜນການນັ້ນຕ້ອງກຳນົດບາດກ້າວ, ວິທີການຈັດຕັ້ງປະຕິບັດ, ມາດຕະການດ້ານການຄຸ້ມຄອງ ແລະ ການເງິນລວມທັງມາດຕະການທາງດ້ານບໍລິຫານ ແລະ ກົດໝາຍ ແລະ ຂໍ້ສະເໜີຕ່າງໆທີ່ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;

3. ອົງການທີ່ມີສິດອຳນາດຕົກລົງ ກ່ຽວກັບສົນທິສັນຍາສາກົນ ມີໜ້າທີ່ຮັບຮອງເອົາມາດຕະການທີ່ເໝາະສົມ ສຳລັບການຈັດຕັ້ງປະຕິບັດສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ໃນກໍລະນີສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ໄດ້ຖືກລະເມີດ ອົງການທີ່ສະເໜີສ້າງສົນທິສັນຍາສາກົນດັ່ງກ່າວ ມີໜ້າທີ່ສະເໜີມາດຕະການອັນຈຳເປັນ ໄປຍັງລັດຖະບານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍປະສານສົມທົບກັບກະຊວງການຕ່າງປະເທດ;

5. ອົງການທີ່ສະເໜີສ້າງສົນທິສັນຍາສາກົນນັ້ນ ມີພັນທະສົ່ງບົດລາຍງານປະຈຳປີກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ໂດຍຜ່ານກະຊວງການຕ່າງປະເທດໄປຍັງລັດຖະບານ ເພື່ອລາຍງານສະພາແຫ່ງຊາດ ພ້ອມທັງ ຈັດສົ່ງສຳເນົາໄປຍັງອົງການໄອຍະການປະຊາຊົນສູງສຸດ ເພື່ອຕິດຕາມກວດກາ.

## ມາດຕາ 35. ການເຄົາລົບ ແລະ ການປະຕິບັດ ສົນທິສັນຍາສາກົນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດສົນທິສັນຍາສາກົນທີ່ໄດ້ເຊັນ ແລະ ເປັນພາຄີແລ້ວ ດ້ວຍຄວາມສຸດຈະລິດ ແລະ ຮຽກຮ້ອງໃຫ້ຄູ່ພາຄີເຄົາລົບ ແລະ ປະຕິບັດເຊັ່ນດຽວກັນ.

## ໝວດທີ 2

## ການຕີຄວາມໝາຍ ແລະ ການເກັບຮັກສາ ສົນທິສັນຍາສາກົນ

### ມາດຕາ 36. ການຕີຄວາມໝາຍສົນທິສັນຍາສາກົນ

ສົນທິສັນຍາສາກົນ ຈະຖືກຕີຄວາມໝາຍໂດຍສອດຄ່ອງກັບກົດໝາຍສາກົນ.

ໃນກໍລະນີທີ່ມີຄວາມເຂົ້າໃຈແຕກຕ່າງກັນ ກ່ຽວກັບເນື້ອໃນຂອງສົນທິສັນຍາສາກົນໃດໜຶ່ງ ໃນເວລາຈັດຕັ້ງປະຕິບັດນັ້ນ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງກ່ອນນຳສະເໜີໄປຍັງລັດຖະບານ ເພື່ອຕີຄວາມໝາຍສົນທິສັນຍາສາກົນໃນລະດັບລັດຖະບານ.

ຄະນະປະຈຳສະພາແຫ່ງຊາດ ມີສິດຕີຄວາມໝາຍຂອງສົນທິສັນຍາສາກົນໃນລະດັບລັດ ຫຼື ສົນທິສັນຍາສາກົນທີ່ໄດ້ຮັບການໃຫ້ສັດຕະຍາບັນ. ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງຍື່ນຂໍ້ສະເໜີກ່ຽວກັບການຕີຄວາມໝາຍຂອງສົນທິສັນຍາສາກົນ ຜ່ານກະຊວງການຕ່າງປະເທດ ໄປຍັງລັດຖະບານ ເພື່ອນຳສະເໜີໄປຍັງຄະນະປະຈຳສະພາແຫ່ງຊາດ.

ພາຍໃນກຳນົດ ສາມສິບ ວັນ ຫຼັງຈາກລັດຖະບານ ຫຼື ຄະນະປະຈຳສະພາແຫ່ງຊາດໄດ້ຕີຄວາມໝາຍຂອງສົນທິສັນຍາສາກົນແລ້ວກະຊວງການຕ່າງປະເທດ ຕ້ອງແຈ້ງກ່ຽວກັບການຕີຄວາມໝາຍຂອງສົນທິສັນຍາສາກົນດັ່ງກ່າວໃຫ້ຄູ່ພາຄີຊາບ.

### ມາດຕາ 37. ການເກັບຮັກສາສົນທິສັນຍາສາກົນ

ການເກັບຮັກສາສົນທິສັນຍາສາກົນໃຫ້ປະຕິບັດ ດັ່ງນີ້ :

1. ກະຊວງການຕ່າງປະເທດ ຮັບຜິດຊອບການຄຸ້ມຄອງ ແລະ ການເກັບຮັກສາເອກະສານສະບັບຕົ້ນຂອງສົນທິສັນຍາທະວີພາຄີທີ່ສ້າງຂຶ້ນໃນລະດັບລັດ ແລະ ລັດຖະບານ, ສົນທິສັນຍາພະຫຸພາຄີທີ່ບໍ່ມີອົງການຈັດຕັ້ງສາກົນໃດໜຶ່ງ ເກັບຮັກສາ ແລະ ສຳເນົາສົນທິສັນຍາພະຫຸພາຄີທີ່ຮັບຮອງເອົາໂດຍອົງການຈັດຕັ້ງສາກົນ ລວມທັງການເກັບຮັກສາສານຮັບຮອງ, ສານເຂົ້າຮ່ວມເປັນພາຄີ, ສານສັດຕະຍາບັນ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງ.

ສົນທິສັນຍາທີ່ກ່ຽວຂ້ອງກັບການກູ້ຢືມເງິນ ແລະ ການຊ່ວຍເຫຼືອລ້າເພື່ອການພັດທະນາ ແມ່ນຖືກເກັບຮັກສາໄວ້ຢູ່ກະຊວງການເງິນ;

2. ພາຍໃນກຳນົດ ສາມສິບວັນ ຫຼັງຈາກການລົງນາມສົນທິສັນຍາ ຫຼື ການເຂົ້າຮ່ວມເປັນພາຄີ ອົງການທີ່ສະເໜີສ້າງສົນທິສັນຍາສາກົນໃນລະດັບລັດ ແລະ ລັດຖະບານນັ້ນຕ້ອງຈັດສົ່ງສະບັບຕົ້ນຂອງສົນທິສັນຍາທະວີພາຄີ ແລະ ສົນທິສັນຍາພະຫຸພາຄີ ພ້ອມດ້ວຍສະບັບແປເປັນພາສາລາວ ໄປຍັງກະຊວງການຕ່າງປະເທດ. ສົນທິສັນຍາທີ່ກ່ຽວຂ້ອງກັບການກູ້ຢືມເງິນ ແລະ ການຊ່ວຍເຫຼືອລ້າ ເພື່ອການພັດທະນາ ຕ້ອງຈັດສົ່ງໄປຍັງກະຊວງການເງິນ;

3. ກະຊວງການຕ່າງປະເທດ ປະຕິບັດໜ້າທີ່ເປັນເສນາທິການໃຫ້ລັດຖະບານ ໃນການເກັບຮັກສາສົນທິສັນຍາສາກົນພະຫຸພາຄີ ໃນກໍລະນີທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຖືກມອບໝາຍໃຫ້ເປັນລັດຜູ້ເກັບຮັກສາ.

### ມາດຕາ 38. ການສຳເນົາສົນທິສັນຍາສາກົນ

ພາຍຫລັງທີ່ສົນທິສັນຍາສາກົນມີຜົນສັກສິດ ສຳລັບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລ້ວ ກະຊວງການຕ່າງປະເທດ ຕ້ອງສຳເນົາ ແລະ ຈັດສົ່ງໄປຍັງຫ້ອງວ່າການສະພາ

ແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ, ຄະນະເລຂາທິການລັດຖະບານ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອຊາບ ແລະ ອົງການທີ່ກ່ຽວຂ້ອງ ເພື່ອນຳໃຊ້ໃນການຈັດຕັ້ງປະຕິບັດ.

**ມາດຕາ 39. ການຈົດທະບຽນສົນທິສັນຍາສາກົນ**

ສົນທິສັນຍາສາກົນທະວິພາຄີ ຊຶ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ແມ່ນກະຊວງການຕ່າງປະເທດສະເໜີຈົດທະບຽນ ຢູ່ທີ່ສຳນັກງານເລຂາທິການອົງການສະຫະປະຊາຊາດ.

## ໝວດທີ 3
## ການປັບປຸງ ແລະ ການຕໍ່ອາຍຸ ສົນທິສັນຍາສາກົນ

**ມາດຕາ 40. ການປັບປຸງສົນທິສັນຍາສາກົນ**

ອົງການທີ່ມີສິດອຳນາດໃນການຕົກລົງ ກ່ຽວກັບການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນນັ້ນ ສາມາດຕົກລົງອະນຸມັດໃຫ້ປັບປຸງ ຫຼື ດັດແກ້ ສົນທິສັນຍາສາກົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ອົງການທີ່ມີສິດອຳນາດຕົກລົງ ກ່ຽວກັບການຮັບຮອງ, ການໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນນັ້ນ ມີສິດອະນຸມັດໃຫ້ປັບປຸງ ຫຼື ດັດແກ້ສົນທິສັນຍາສາກົນດັ່ງກ່າວ. ພາຍໃນກຳນົດສາມສິບວັນ ຫຼັງຈາກໄດ້ຮັບ ແລະ ພິຈາລະນາເຫັນດີຕາມຂໍ້ສະເໜີຂອງອົງການທີ່ສະເໜີສ້າງສົນທິສັນຍານັ້ນ ອົງການທີ່ມີສິດອຳນາດດັ່ງກ່າວ ຕ້ອງອອກແຈ້ງການຢ່າງເປັນລາຍລັກອັກສອນ.

ຫຼັງຈາກໄດ້ຮັບການອະນຸມັດ ຈາກອົງການທີ່ມີສິດອຳນາດດັ່ງກ່າວແລ້ວ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງດຳເນີນການປັບປຸງ ຫຼື ດັດແກ້ສົນທິສັນຍາສາກົນນັ້ນ ໂດຍປະສານສົມທົບກັບກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທຳ ພ້ອມທັງລາຍງານໄປຍັງອົງການທີ່ມີສິດອຳນາດຂອງລັດ ແລະ ແຈ້ງຜົນການປັບປຸງ ຫຼື ດັດແກ້ສົນທິສັນຍາສາກົນດັ່ງກ່າວໃຫ້ກະຊວງ ແລະ ອົງການທີ່ກ່ຽວຂ້ອງຊາບ.

**ມາດຕາ 41. ການຕໍ່ອາຍຸສົນທິສັນຍາສາກົນ**

ອົງການທີ່ມີສິດອຳນາດໃນການຕົກລົງ ກ່ຽວກັບການເຈລະຈາ ແລະ ການລົງນາມສົນທິສັນຍາສາກົນນັ້ນ ສາມາດຕົກລົງອະນຸມັດໃຫ້ຕໍ່ອາຍຸສົນທິສັນຍາສາກົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ອົງການທີ່ມີສິດອຳນາດຕົກລົງ ກ່ຽວກັບການຮັບຮອງ, ການໃຫ້ສັດຕະຍາບັນແກ່ສົນທິສັນຍາສາກົນນັ້ນ ມີສິດອະນຸມັດໃຫ້ຕໍ່ອາຍຸສົນທິສັນຍາສາກົນດັ່ງກ່າວ. ພາຍໃນກຳນົດສາມສິບວັນ ຫຼັງຈາກໄດ້ຮັບ ແລະ ພິຈາລະນາເຫັນດີຕາມຂໍ້ສະເໜີຂອງອົງການທີ່ສະເໜີສ້າງສົນທິສັນຍາ ນັ້ນ ອົງການທີ່ມີສິດອຳນາດດັ່ງກ່າວ ຕ້ອງອອກແຈ້ງການຢ່າງເປັນລາຍລັກອັກສອນ.

ຫຼັງຈາກໄດ້ຮັບການອະນຸມັດ ຈາກອົງການທີ່ມີສິດອຳນາດດັ່ງກ່າວແລ້ວ ອົງການທີ່ສະເໜີສ້າງສົນທິສັນຍາສາກົນ ຕ້ອງດຳເນີນການຕໍ່ອາຍຸສົນທິສັນຍາສາກົນນັ້ນ ໂດຍປະສານສົມທົບກັບກະຊວງການຕ່າງປະເທດ ພ້ອມທັງລາຍງານໄປຍັງອົງການທີ່ມີສິດອຳນາດຂອງລັດ ແລະ ແຈ້ງຜົນການຕໍ່ອາຍຸສົນທິສັນຍາສາກົນດັ່ງກ່າວ ໃຫ້ກະຊວງ ແລະ ອົງການທີ່ກ່ຽວຂ້ອງ ຊາບ.

## ໝວດທີ 4
## ການຍົກເລີກ ຫຼື ການໂຈະການນຳໃຊ້ສົນທິສັນຍາສາກົນ

**ມາດຕາ 42. ການຍົກເລີກສົນທິສັນຍາສາກົນ**

ການຍົກເລີກສົນທິສັນຍາສາກົນ ສາມາດດຳເນີນດ້ວຍວິທີການລົບລ້າງ, ການຢຸດເຊົາ ແລະ ການຖອນຕົວອອກຈາກສົນທິສັນຍາສາກົນໃນກໍລະນີ ດັ່ງນີ້:

1. ມີບົດບັນຍັດຂອງສົນທິສັນຍາທີ່ກ່ຽວຂ້ອງກຳນົດໄວ້ ຫຼື ມີຄວາມສະໝັກໃຈ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບັນດາລັດພາຄີທີ່ກ່ຽວຂ້ອງ;

2. ສົນທິສັນຍາທີ່ຖືກສ້າງຂຶ້ນໃນເວລາຕໍ່ມານັ້ນ ຫາກມີເນື້ອໃນຄ້າຍຄືກັນກັບສົນທິສັນຍາທີ່ ໄດ້ສ້າງຂຶ້ນກ່ອນ;

3. ມີການລະເມີດສົນທິສັນຍາທີ່ກ່ຽວຂ້ອງ;

4. ມີການຕັດສາຍພົວພັນທາງການທູດ ຫຼື ກົງສຸນ.

**ມາດຕາ 43. ສິດອຳນາດໃນການຕົກລົງກ່ຽວກັບການຍົກເລີກສົນທິສັນຍາສາກົນ**

ອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດອຳນາດຕົກລົງໃຫ້ຍົກເລີກສົນທິສັນຍາສາກົນ ມີດັ່ງນີ້ :

1. ປະທານປະເທດ ມີສິດປະກາດການຍົກເລີກສົນທິສັນຍາສາກົນ ໃນລະດັບລັດ ແລະ ສົນທິສັນຍາສາກົນທີ່ຕົນປະກາດການໃຫ້ສັດຕະຍາບັນ ຕາມການສະເໜີຂອງຄະນະປະຈຳສະພາ ແຫ່ງຊາດ;

2. ຄະນະປະຈຳສະພາແຫ່ງຊາດ ມີສິດຕົກລົງກ່ຽວກັບການຍົກເລີກສົນທິສັນຍາສາກົນໃນ ລະດັບລັດ ແລະ ສົນທິສັນຍາສາກົນທີ່ໄດ້ຮັບການໃຫ້ສັດຕະຍາບັນ ຕາມການສະເໜີຂອງລັດຖະ ບານ;

3. ລັດຖະບານ ມີສິດຕົກລົງກ່ຽວກັບການຍົກເລີກສົນທິສັນຍາສາກົນ ຊຶ່ງລັດຖະບານໄດ້ ຮັບຮອງ ຫຼື ລົງນາມ ຫຼື ເຂົ້າຮ່ວມເປັນພາຄີໂດຍປາສະຈາກການໃຫ້ສັດຕະຍາບັນ.

**ມາດຕາ 44. ການສະເໜີຂໍຄຳຕົກລົງ ກ່ຽວກັບ ການຍົກເລີກສົນທິສັນຍາສາກົນ**

ການສະເໜີຂໍຄຳຕົກລົງ ກ່ຽວກັບການຍົກເລີກສົນທິສັນຍາສາກົນໃຫ້ປະຕິບັດດັ່ງນີ້ :

1. ອົງການທີ່ສະເໜີສ້າງສົນທິສັນຍາ ຕ້ອງປຶກສາຫາລື ແລະ ຮັບຄຳເຫັນຈາກກະຊວງ ການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງພາຍໃນ ສິບຫ້າວັນ ຫຼັງຈາກໄດ້ຮັບ ການສະເໜີຂໍຍົກເລີກຈາກລັດພາຄີຕ່າງປະເທດ ຫຼື ອົງການທີ່ກ່ຽວຂ້ອງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

2. ອົງການທີ່ໄດ້ຮັບການສະເໜີຂໍຄຳເຫັນນັ້ນ ຕ້ອງໃຫ້ຄຳຕອບ ກ່ຽວກັບການສະເໜີຍົກ ເລີກສົນທິສັນຍາສາກົນ ໄປຍັງອົງການທີ່ສະເໜີສ້າງສົນທິສັນຍາ ພາຍໃນ ສິບຫ້າ ວັນ ຫຼັງຈາກໄດ້ ຮັບການສະເໜີຂໍຄຳເຫັນຢ່າງເປັນລາຍລັກອັກສອນ;

3. ອົງການທີ່ສະເໜີສ້າງສົນທິສັນຍາ ຕ້ອງຍື່ນຂໍ້ສະເໜີຂໍຄຳຕົກລົງກ່ຽວກັບການຍົກເລີກ ສົນທິສັນຍາສາກົນ ໄປຍັງລັດຖະບານ ພາຍໃນ ສາມສິບວັນ ຫຼັງຈາກໄດ້ຮັບຄຳຕອບຈາກອົງການທີ່ ກ່ຽວຂ້ອງ ດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂ້າງເທິງນີ້.

ມາດຕາ 45. ການປະກອບເອກະສານເພື່ອຂໍຄຳຕີກລົງກ່ຽວກັບການຍົກເລີກສົນທິສັນຍາສາກົນ

ໃນກໍລະນີມີຄວາມຈຳເປັນຕ້ອງຍົກເລີກສົນທິສັນຍາສາກົນ ອົງການທີ່ສະເໜີສ້າງສົນທິສັນຍາທີ່ກ່ຽວຂ້ອງຕ້ອງປະກອບເອກະສານ ເພື່ອສະເໜີຂໍຄຳຕົກລົງຈາກລັດຖະບານ ຫຼື ຈາກສະພາແຫ່ງຊາດ ຖ້າວ່າສົນທິສັນຍານັ້ນ ໄດ້ຮັບການໃຫ້ສັດຕະຍາບັນ ໂດຍສະເໜີລາຍລະອຽດກ່ຽວກັບເຫດຜົນ ແລະ ຜົນກະທົບທາງດ້ານກົດໝາຍຂອງການດຳເນີນການດັ່ງກ່າວ. ກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ ຕ້ອງປະກອບຄຳເຫັນຢ່າງເປັນລາຍລັກອັກສອນບົນພື້ນຖານການສະເໜີຂອງລັດພາຄີຕ່າງປະເທດ ຫຼື ອົງການທີ່ສະເໜີສ້າງສົນທິສັນຍາຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບຈຸດປະສົງຂອງການດຳເນີນການດັ່ງກ່າວ.

ມາດຕາ 46. ການໂຈະການນຳໃຊ້ສົນທິສັນຍາສາກົນ

ການໂຈະການນຳໃຊ້ສົນທິສັນຍາສາກົນ ສາມາດປະຕິບັດໄດ້ ສຳລັບບົດບັນຍັດທັງໝົດ ຫຼື ບາງສ່ວນຂອງສົນທິສັນຍາທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບບົດບັນຍັດຂອງສົນທິສັນຍາສາກົນ ຫຼື ດ້ວຍຄວາມສະໝັກໃຈຂອງບັນດາລັດພາຄີທີ່ກ່ຽວຂ້ອງຊຶ່ງໄດ້ແກ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດພາຄີຕ່າງປະເທດ.

ການໂຈະການນຳໃຊ້ສົນທິສັນຍາສາກົນ ສາມາດປະຕິບັດໄດ້ ໃນກໍລະນີ ດັ່ງນີ້ :

1. ມີບົດບັນຍັດຂອງສົນທິສັນຍາທີ່ກ່ຽວຂ້ອງກຳນົດໄວ້ ຫຼື ມີຄວາມສະໝັກໃຈ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ບັນດາລັດພາຄີທີ່ກ່ຽວຂ້ອງ;

2. ສົນທິສັນຍາທີ່ຖືກສ້າງຂຶ້ນໃນເວລາຕໍ່ມານັ້ນ ຫາກມີເນື້ອໃນຄ້າຍຄືກັນກັບສົນທິສັນຍາທີ່ໄດ້ສ້າງຂຶ້ນກ່ອນ;

3. ມີການລະເມີດສົນທິສັນຍາທີ່ກ່ຽວຂ້ອງ;

4. ມີການຕັດສາຍພົວພັນທາງການທູດ ຫຼື ກົງສຸນ.

ມາດຕາ 47. ສິດອຳນາດໃນການຕົກລົງກ່ຽວກັບການໂຈະການນຳໃຊ້ສົນທິສັນຍາ

ອົງການຈັດຕັ້ງ ແລະ ບຸກຄົນທີ່ມີສິດອຳນາດຕົກລົງ ໃຫ້ໂຈະການນຳໃຊ້ສົນທິສັນຍາສາກົນ ມີ ດັ່ງນີ້ :

1. ປະທານປະເທດ ມີສິດປະກາດການໂຈະການນຳໃຊ້ສົນທິສັນຍາສາກົນ ໃນລະດັບລັດ ແລະ ສົນທິສັນຍາສາກົນທີ່ຕົນປະກາດການໃຫ້ສັດຕະຍາບັນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;

2. ຄະນະປະຈຳສະພາແຫ່ງຊາດ ມີສິດຕົກລົງກ່ຽວກັບການໂຈະການນຳໃຊ້ສົນທິສັນຍາສາກົນ ໃນລະດັບລັດ ແລະ ສົນທິສັນຍາສາກົນທີ່ໄດ້ຮັບການໃຫ້ສັດຕະຍາບັນ;

3. ລັດຖະບານ ມີສິດຕົກລົງກ່ຽວກັບການໂຈະການນຳໃຊ້ສົນທິສັນຍາສາກົນ ຊຶ່ງລັດຖະບານໄດ້ຮັບຮອງ ຫຼື ລົງນາມ ຫຼື ເຂົ້າຮ່ວມເປັນພາຄີ ໂດຍປາສະຈາກການໃຫ້ສັດຕະຍາບັນ.

ມາດຕາ 48. ການສະເໜີຂໍຄຳຕົກລົງ ກ່ຽວກັບ ການໂຈະການນຳໃຊ້ສົນທິສັນຍາສາກົນ

ການສະເໜີຂໍຄຳຕົກລົງກ່ຽວກັບການໂຈະການນຳໃຊ້ສົນທິສັນຍາສາກົນໃຫ້ປະຕິບັດດັ່ງນີ້ :

1. ອົງການທີ່ສະເໜີສ້າງສົນທິສັນຍາ ຕ້ອງປຶກສາຫາລື ແລະ ຮັບຄຳເຫັນຈາກກະຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ ພາຍໃນ ສິບຫ້າວັນ ຫຼັງຈາກໄດ້ຮັບ

ການສະເໜີຂໍໂຈະການນຳໃຊ້ສົນທິສັນຍາສາກົນຈາກລັດພາຄີຕ່າງປະເທດ ຫຼື ອົງການທີ່ກ່ຽວຂ້ອງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

2. ອົງການທີ່ໄດ້ຮັບການສະເໜີຂໍຄຳເຫັນນັ້ນ ຕ້ອງໃຫ້ຄຳຕອບ ກ່ຽວກັບການສະເໜີຂໍໂຈະການນຳໃຊ້ສົນທິສັນຍາສາກົນ ໄປຍັງອົງການທີ່ສະເໜີສ້າງສົນທິສັນຍາພາຍໃນສິບຫ້າວັນ ຫຼັງຈາກໄດ້ຮັບການສະເໜີຂໍຄຳເຫັນຢ່າງເປັນລາຍລັກອັກສອນ;

3. ອົງການທີ່ສະເໜີສ້າງສົນທິສັນຍາ ຈະຕ້ອງຍື່ນຂໍ້ສະເໜີຂໍຄຳຕົກລົງ ກ່ຽວກັບການຂໍໂຈະການນຳໃຊ້ສົນທິສັນຍາສາກົນ ໄປຍັງລັດຖະບານ ພາຍໃນ ສາມສິບວັນ ຫຼັງຈາກໄດ້ຮັບຄຳຕອບຈາກອົງການທີ່ກ່ຽວຂ້ອງ ດັ່ງທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂ້າງເທິງນີ້.

**ມາດຕາ 49. ການປະກອບເອກະສານສະເໜີຂໍຄຳຕົກລົງກ່ຽວກັບການໂຈະການນຳໃຊ້ສົນທິສັນຍາ**

ໃນກໍລະນີມີຄວາມຈຳເປັນຕ້ອງໂຈະການນຳໃຊ້ສົນທິສັນຍາສາກົນ ອົງການທີ່ສະເໜີສ້າງສົນທິສັນຍາທີ່ກ່ຽວຂ້ອງ ຕ້ອງປະກອບເອກະສານ ເພື່ອສະເໜີຂໍຄຳຕົກລົງຈາກລັດຖະບານ ຫຼື ຈາກສະພາແຫ່ງຊາດ ຖ້າວ່າສົນທິສັນຍານັ້ນ ໄດ້ຮັບການໃຫ້ສັດຕະຍາບັນ ໂດຍສະເໜີລາຍລະ ອຽດກ່ຽວກັບເຫດຜົນ ແລະ ຜົນກະທົບທາງດ້ານກົດໝາຍຂອງການດຳເນີນການດັ່ງກ່າວ. ກະ ຊວງການຕ່າງປະເທດ, ກະຊວງຍຸຕິທຳ ແລະ ອົງການອື່ນທີ່ກ່ຽວຂ້ອງ ຕ້ອງປະກອບຄຳເຫັນ ຢ່າງເປັນລາຍລັກອັກສອນ ບົນພື້ນຖານການສະເໜີຂອງລັດພາຄີຕ່າງປະເທດ ຫຼື ອົງການທີ່ສະເໜີ ສ້າງສົນທິສັນຍາຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບຈຸດປະສົງຂອງການດຳເນີນການດັ່ງກ່າວ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 50. ອົງການຄຸ້ມຄອງ**

ລັດຖະບານຄຸ້ມຄອງວຽກງານ ກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ຢ່າງລວມສູນ ແລະ ເປັນເອກະພາບກັນໃນທົ່ວປະເທດ ໂດຍມອບໃຫ້ກະຊວງການຕ່າງປະເທດ ເປັນໃຈກາງປະສານສົມທົບກັບກະຊວງຍຸຕິທຳ, ກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ.

ວຽກງານການຄຸ້ມຄອງຂອງລັດ ກ່ຽວກັບສົນທິສັນຍາສາກົນ ປະກອບດ້ວຍ :

1. ການອອກແຈ້ງການ ແລະ ການຮັບຮອງເອົາມາດຕະການ ທີ່ເໝາະສົມສຳລັບການສ້າງ , ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ;

2. ການສ້າງແຜນການ ເພື່ອຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາສາກົນ;

3. ການເຜີຍແຜ່ ສິດ, ໜ້າທີ່ກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ລວມທັງການກຳນົດວິທີການນຳໃຊ້;

4. ການຕິດຕາມກວດກາສົນທິສັນຍາສາກົນ;

5. ການຕິດຕາມກວດກາການນຳໃຊ້ສິດ ແລະ ໜ້າທີ່ກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ;

6. ການເກັບຮັກສາ ແລະ ການພິມເຜີຍແຜ່ສົນທິສັນຍາສາກົນ;

7. ການແກ້ໄຂຂໍ້ຂັດແຍ່ງທີ່ເກີດຈາກການລະເມີດສົນທິສັນຍາ ແລະ ການຍົກເລີກສົນທິສັນຍາສາກົນ;

8. ການສະຫຼຸບ, ປະເມີນຜົນ ແລະ ຕີລາຄາກ່ຽວກັບການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ.

## ມາດຕາ 51. ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ

ໃນການຄຸ້ມຄອງວຽກງານສົນທິສັນຍາສາກົນ ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້າຮ່າງນະໂຍບາຍ ແລະ ແຜນຍຸດທະສາດ ກໍຄືແຜນການດຳເນີນງານກ່ຽວກັບວຽກງານທີ່ພົວພັນເຖິງສົນທິສັນຍາສາກົນ ບົນພື້ນຖານຍຸດທະສາດ ແລະ ແຜນການເພີ່ມທະວີການພົວພັນ ແລະ ຮ່ວມມືກັບຕ່າງປະເທດ;

2. ຈັດຕັ້ງເຜີຍແຜ່ສົນທິສັນຍາສາກົນ ແລະ ກົດໝາຍສາກົນ ແນໃສ່ຮັບປະກັນການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ;

3. ໃຫ້ຄຳແນະນຳ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ ແລະ ລະບຽບການກ່ຽວກັບວຽກງານສົນທິສັນຍາສາກົນ;

4. ເຂົ້າຮ່ວມໃນການພົບປະເຈລະຈາ ເພື່ອສ້າງສົນທິສັນຍາສາກົນທະວິພາຄີ ແລະ ພະຫຸພາຄີ; ປະສານສົມທົບໃນການຄົ້ນຄວ້າ, ກວດກາຮ່າງເນື້ອໃນສົນທິສັນຍາສາກົນ ເພື່ອນຳສະເໜີຂໍ້ຄຳຕົກລົງ ກ່ຽວກັບການເຈລະຈາ, ການລົງນາມ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດ;

5. ປະກອບຄວາມເຫັນ ແລະ ໃຫ້ຄຳປຶກສາດ້ານກົດໝາຍສາກົນ; ສະເໜີອອກໃບມອບສິດຂອງລັດຖະບານ ແລະ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ເພື່ອເຂົ້າຮ່ວມກອງປະຊຸມສາກົນ ແລະ ການລົງນາມສົນທິສັນຍາສາກົນ; ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ປະຕິບັດວຽກງານທີ່ກ່ຽວຂ້ອງກັບສົນທິສັນຍາສາກົນ;

6. ຕິດຕໍ່ພົວພັນວຽກງານກັບຕ່າງປະເທດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດວຽກງານ ທີ່ພົວພັນເຖິງສົນທິສັນຍາສາກົນ ເພື່ອລາຍງານຕໍ່ລັດຖະບານ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມການມອບໝາຍ ຂອງລັດຖະບານ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ມາດຕາ 52. ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ

ໃນການຄຸ້ມຄອງວຽກງານສົນທິສັນຍາສາກົນ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ຄົ້ນຄວ້ານິຕິກຳຕ່າງໆ ກ່ຽວກັບການສ້າງ ແລະ ການເຂົ້າຮ່ວມເປັນພາຄີ ສົນທິສັນຍາສາກົນ ຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມການມອບໝາຍຂອງລັດຖະບານ ລວມທັງການປະກອບຄວາມເຫັນກ່ຽວກັບບັນດາສົນທິສັນຍາສາກົນ ຊຶ່ງພາກສ່ວນທີ່ກ່ຽວຂ້ອງສະເໜີມາ;

2. ກວດກາຄວາມຖືກຕ້ອງຂອງບົດສົນທິສັນຍາສາກົນ, ໃຫ້ຄຳເຫັນດ້ານກົດໝາຍສຳລັບ

ສົນທິສັນຍາທີ່ກ່ຽວຂ້ອງກັບການກູ້ຢືມເງິນຈາກຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ແລະ ພາກພື້ນ, ກວດກາບົດແປພາສາລາວ ຂອງສົນທິສັນຍາສາກົນທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະສ້າງ ແລະ ເຂົ້າຮ່ວມເປັນພາຄີ;

3. ປະກອບສ່ວນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາສາກົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 53. ສິດ ແລະ ໜ້າທີ່ຂອງກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ

ໃນການຄຸ້ມຄອງວຽກງານສົນທິສັນຍາສາກົນ ບັນດາກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ ຕ້ອງປະສານສົມທົບ ແລະ ຮ່ວມມືກັບກະຊວງການຕ່າງປະເທດ ແລະ ກະຊວງຍຸຕິທຳຕາມພາລະບົດບາດຂອງຕົນ.

## ໝວດທີ 2
## ການກວດກາ

### ມາດຕາ 54. ອົງການກວດກາ

ອົງການກວດກາ ປະກອບດ້ວຍ :

- ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງທີ່ໄດ້ກຳນົດໄວ້ໃນ ມາດຕາ 50 ຂອງລັດຖະບັນຍັດສະບັບນີ້;
- ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດເປັນຜູ້ຕິດຕາມກວດກາ ການສ້າງ, ການເຂົ້າຮ່ວມເປັນພາຄີ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ ຕາມພາລະບົດບາດຂອງຕົນ.

### ມາດຕາ 55. ເນື້ອໃນການກວດກາ

ການກວດກາ ມີເນື້ອໃນ ດັ່ງນີ້:

1. ກວດກາການສ້າງ ແລະ ການເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນ;
2. ກວດກາການພັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດສົນທິສັນຍາສາກົນ;
3. ກວດກາການລາຍງານກ່ຽວກັບວຽກງານສົນທິສັນຍາສາກົນ.

### ມາດຕາ 56. ສິດ ແລະ ໜ້າທີ່ຂອງອົງການກວດກາ

ອົງການກວດກາມີສິດ ແລະ ໜ້າທີ່ ດັ່ງນີ້ :

1. ກວດກາວຽກງານທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງລັດຖະບັນຍັດສະບັບນີ້;

2. ໄດ້ຮັບ ແລະ ພິຈາລະນາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາສາກົນ ຂອງລັດຖະບານ;

3. ພິຈາລະນາ ແລະ ໃຫ້ຄຳເຫັນແນະນຳ ກ່ຽວກັບການປັບປຸງ ແລະ ການປະກາດໃຊ້ນິຕິກຳພາຍໃນທີ່ເໝາະສົມ ເພື່ອຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີຢ່າງມີປະສິດທິຜົນ;

4. ໃຫ້ຄຳແນະນຳຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ເມື່ອເຫັນວ່າມີການຈັດຕັ້ງປະຕິບັດບໍ່ຖືກຕ້ອງຕາມລັດຖະບັນຍັດສະບັບນີ້;

5. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 57. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 58. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລັດຖະບັນຍັດສະບັບນີ້ ຈະໄດ້ຮັບການປະຕິບັດມາດຕະການສຶກສາອົບຮົມ, ມາດຕະການທາງວິໄນ ແລະ ມາດຕະການອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ພາກທີ VII
## ບົດບັນຍັດສຸດທ້າຍ

### ມາດຕາ 59. ການຈັດຕັ້ງປະຕິບັດ

ຫ້ອງວ່າການສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ, ຄະນະເລຂາທິການລັດຖະບານ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການປົກຄອງທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 60. ຜົນສັກສິດ

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານປະເທດແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ